# ອັລ-ອິສລາມ

ຂໍ້ຄວາມສັ້ນໆກ່ຽວກັບອິດສະລາມທີ່ໄດ້ກ່າວໄວ້ໃນ ພຣະຄຳພີອັລກຸຣອານ
ແລະ ຊຸນນະຫ໌ ຂອງທ່ານສາດສະດາ
(ສະບັບຖອດຖອນຫຼັກຖານ)

໑.         ອິດສະລາມເປັນສານຂອງອັລລໍຫ໌ສຳຫຼັບມະນຸດທຸກຄົນ

ເນື່ອງຈາກເປັນສານຈາກສະຫວັນອັນນິລັນດອນ

໒.ອິດສະລາມບໍ່ແມ່ນສາສະຫນາສະເພາະເຊື້ອຊາດຫຼືຊົນຊາດໃດຊົນຊາດຫນຶ່ງເທົ່ານັ້ນ ແຕ່ເປັນສາດສະຫນາຂອງອັລລໍຫ໌ສຳລັບມະນຸດທັງມວນ

໓. ອິດສະລາມຄືສານອັນສູງຊົງ ຊຶ່ງມາເປັນສ່ວນເສີມຕໍ່ຂອງຂ່າວສານຂອງສາດສະດາຄົນກ່ອນໆ ຂໍພອນຄວາມສະຫງົບສຸກແກ່ພວກເຂົາ   ແລະປະຊາຊາດຂອງພວກເຂົາ

໔. ບັນດາສາດສະດາທັ້ງຫຼາຍ  "ຂໍຄວາມສະຫງົບສຸກຈົ່ງມີກັບພວກທ່ານ" ມີສາສະຫນາອັນດຽວກັນ ແລະກົດຫມາຍບົດບັນຍັດທີ່ແຕກຕ່າງກັນ

໕. ອິດສະລາມຮຽກຮ້ອງ  -  ດັ່ງທີ່ສາດສະດາທັງຫມົດໄດ້ຮຽກມາກ່ອນ ເຊັ່ນ: ໂນອາ, ອັບຣາຮາມ, ໂມເຊ, ໂຊໂລໂມນ, ດາວິດແລະພຣະເຢຊູ,  -  ຄວາມສະຫງົບສຸກຈົ່ງເກີດຂຶ້ນກັບພວກເຂົາ - ເຊື່ອວ່າພຣະເຈົ້າຄືພຣະເຈົ້າ, ຜູ້ສ້າງ, ຜູ້ຈັດການ, ຜູ້ໃຫ້ຄວາມເປັນຄວາມຕາຍ, ຜູ້ປົກຂອງອຳນາດອະທິປະໄຕ, ແລະພຣະອົງເປັນຜູ້ຊົງຈັດການ ການງານຕ່າງໆ ແລະພຣະອົງຄືຜູ້ຊົງກະລຸນາປານີ  ຜູ້ຊົງເມດຕາ

໖. ອັລລໍຫ໌  ຊຸບຮານະຮູ  ອະຕາອາລາ  ພຣະອົງຄືພຣະຜູ້ຊົງສ້າງແລະພຣະອົງຜູ້ດຽວເທົ່ານັ້ນທີ່ຄູ່ຄວນໄດ້ຮັບການນະມັດສະການ, ແລະບໍ່ມີຜູ້ໃດທີ່ຄູ່ຄວນໄດ້ຮັບການນະມັດສະການຮ່ວມກັບພຣະອົງ

໗.  ອັລລໍຫ໌  ຄືພຣະຜູ້ຊົງສ້າງທຸກສິ່ງທີ່ຢູ່ໃນຈັກກະວານຂອງສິ່ງທີ່ພວກເຮົາເຫັນ ແລະສິ່ງທີ່ພວກເຮົາບໍ່ເຫັນ, ແລະທຸກສິ່ງທັງຫມົດທີ່ມີຊີວິດເປັນການສ້າງຂອງພຣະອົງ ແລະອັລລໍຫ໌ໄດ້ສ້າງຊັ້ນຟ້າແລະແຜ່ນດິນໂລກໃນຫົກມື້

໘. ແລະ ພຣະອົງອັລລໍຫ໌ຜູ້ຊົງຣິດອຳນາດຍິ່ງໃຫຍ່ ບໍ່ມີຫຸ້ນສ່ວນໃນການຄອບຄອງ, ການສ້າງ, ການວາງແຜນ, ຫລື ການນະມັດສະການຂອງພຣະອົງ

໙.   ແລະ   ພຣະອົງອັລລໍຫ໌ຜູ້ຊົງສູງສົ່ງ   ພຣະອົງບໍ່ຊົງປະສູດ, ແລະພຣະອົງບໍ່ຊົງຖືກປະສູດ,    ແລະບໍ່ມີຜູ້ໃດສະເໝີເຫມືອນຫຼືເທົ່າທຽມກັບພຣະອົງ

໑໐.  ແລະ  ພຣະອົງອັລລໍຫ໌ຜູ້ຊົງສູງສົ່ງ  ບໍ່ໄດ້ແກ້ໄຂໃນສິ່ງໃດໆແລະພຣະອົງບໍ່ຊົງມີຮູບຮ່າງເຫມືອນສິ່ງທີ່ພຣະອົງຊົງສ້າງ

໑໑.   ພຣະອົງອັລລໍຫ໌ຜູ້ຊົງສູງສົ່ງ  ພຣະອົງຄືຜູ້ຊົງກະລຸນາປານີຜູ້ຊົງເມດຕາ  ຕໍ່ບ່າວຂອງພຣະອົງ  ດ້ວຍການສົ່ງສາດສະດາມາແລະປະທານຄຳພີລົງມາ

໑໒. ອັລລໍຫ໌ຄືພຣະຜູ້ເປັນເຈົ້າ ຜູ້ຊົງເມດຕາ ແລະພຣະອົງຜູ້ດຽວທີ່ຈະພິພາກສາສິ່ງມີຊີວິດຕ່າງໆໃນວັນກິຍາມະຫ໌   (ວັນແຫ່ງການຟື້ນຄືນຊີບ)   ເມື່ອພຣະອົງຊົງປຸກພວກເຂົາທັງໝົດຂຶ້ນຈາກຫລຸມຝັງສົບ   ດັ່ງນັ້ນພຣະອົງຈະຊົງໃຫ້ຕອບແທນແຕ່ລະຄົນສຳລັບສິ່ງທີ່ເຂົາໄດ້ເຮັດ   ບໍ່ວ່າຈະດີຫຼືຊົ່ວ

໑໓. ພຣະອົງອັລລໍຫ໌ຜູ້ຊົງສູງສົ່ງ ຊົງສ້າງທ່ານອາດຳຈາກຂີ້ຝຸ່ນດິນ ແລະ ເຮັດໃຫ້ເຊື້ອສາຍຂອງເຂົານັບມື້ນັບເພີ່ມຂຶ້ນຫຼັງຈາກເຂົາ ເພາະວ່າທຸກຄົນມີຄວາມສະເໝີພາບກັນໂດຍກຳເນີດ ແລະບໍ່ມີເພດຫນຶ່ງເໜືອໄປກວ່າເພດໃດເພດຫນຶ່ງ ຫລື ກຸ່ມຊົນໃດຫນຶ່ງດີໄປກວ່າກຸ່ມຊົນອື່ນ   ຍົກເວັ້ນໂດຍຄວາມສັດທາຍຳເກງທີ່ມີໃນຕົວຂອງເຂົາເອງ

໑໔. ເດັກນ້ອຍທຸກຄົນເກີດມາໂດຍສັນສາດຕະຍານ

໑໕. ບໍ່ມີມະນຸດຄົນໃດເກີດມາມີບາບຫຼືໄດ້ຮັບບາບຈາກຄົນອື່ນ

໑໖.  ຈຸດປະສົງທີ່ສ້າງມະນຸດຂຶ້ນມານັ້ນ  ຄືການເຄົາລົບພັກດີຕໍ່ພຣະອົງອັລລໍຫ໌ອົງດຽວ

໑໗.     ອິດສະລາມໃຫ້ກຽດແກ່ຜູ້ຊາຍແລະແມ່ຍິງ     ແລະຮັບປະກັນສິດຂອງລາວຢ່າງເຕັມທີ່  ແລະກຳໜົດໃຫ້ລາວຕ້ອງຮັບຜິດຊອບຕໍ່ທຸກການກະທຳທີ່ຕົວເອງເລືອກ ແລະ ການງານຂອງລາວທັງໝົດ  ແລະ  ລາວຕ້ອງຮັບຜິດຊອບຕໍ່ການກະທຳໃດໆທີ່ເປັນອັນຕະລາຍຕໍ່ຕົນເອງຫຼືເປັນອັນຕະລາຍຕໍ່ຜູ້ອື່ນ

໑໘. ເຮັດໃຫ້ມີເພດຊາຍ ແລະ ເພດຍິງ ມີຄວາມສະເໝີພາບຕ່າງຄົນຕ່າງມີຫນ້າທີ່ຄວາມຮັບຜິດຊອບ ມີບົດລົງໂທດ ແລະ ມີລາງວັນການຕອບແທນໃຫ້

໑໙.ອິດສະລາມໃຫ້ກຽດແມ່ຍິງຖືວ່າແມ່ຍິງເປັນສ່ວນໜຶ່ງຂອງຜູ້ຊາຍ ແລະຜູ້ຊາຍມີພັນທະທີ່ຈະໃຊ້ຈ່າຍໃຫ້ນາງຖ້າລາວສາມາດດັ່ງນັ້ນການດູແລເບິ່ງລູກສາວເປັນໜ້າທີ່ຂອງພໍ່     ແລະແມ່ອ້າຍນ້ອງຊາຍໃນຄອບຄົວຂອງນາງ     ຖ້າຫາກນາງເປັນຜູ້ໃຫຍ່ແລະມີຄວາມສາມາດແລ້ວ  ໜ້າທີ່ການດູແລພັນລະຍາກໍ່ຄືສາມີຂອງນາງ

໒໐. ຄວາມຕາຍບໍ່ໄດ້ແມ່ນທຸກຢ່າງຈະຈົບລົງໄປ ແຕ່ເປັນການປ່ຽນຈາກບ່ອນພັກຢູ່ຊົ່ວຄາວແຫ່ງການກະທຳການງານຕ່າງໆໄປສູ່ສະຖານທີ່ແຫ່ງການຕອບແທນ ແລະຄວາມຕາຍກ່ຽວຂ້ອງກັບຮ່າງກາຍແລະຈິດວິນຍານ   ແລະ   ຄວາມຕາຍຂອງຈິດວິນຍານຄືການແຍກອອກຈາກຮ່າງກາຍຂອງເຮົາ ຫຼັງຈາກນັ້ນມັນຈະກັບຄືນມາສູ່ຮ່າງກາຍຂອງມັນໃນວັນແຫ່ງການຟື້ນຄືນຊີບແລະຈິດວິນຍານຫຼັງຄວາມຕາຍບໍ່ໄດ້ໂອນໄປສູ່ຮ່າງກາຍອື່ນໃດແລະບໍ່ໄດ້ແຜ່ພັນໃນຮ່າງກາຍອື່ນ

໒໑.    ອິດສະລາມຮຽກຮ້ອງໃຫ້ມີຄວາມເຊື່ອໃນພື້ນຖານອັນຍິ່ງໃຫຍ່ຂອງຄວາມເຊື່ອສັດທາ ເຊິ່ງໄດ້ແກ່ ຄວາມເຊື່ອໃນພຣະເຈົ້າແລະເທວະທູດຂອງພຣະອົງ      ຄວາມເຊື່ອໃນຫນັງສືອັນສູງສົ່ງເຊັ່ນ: ອັດ-ເຕົາຣອດ ອັລ-ອິນຈີລ (ກ່ອນທີ່ມັນຈະຖືກບິດເບືອນ) ແລະ ອັລ-ກຸຣອານ ຄວາມເຊື່ອໃນ ບັນດານະບີແລະຜູ້ປະກາດສານທັງຫມົດ      (ຄວາມສະຫງົບສຸກຈົ່ງເກີດຂຶ້ນກັບພວກເຂົາ) ແລະເຊື່ອໃນນະບີຄົນສຸດທ້າຍ  ເຊິ່ງແມ່ນ  ທ່ານນະບີມຸຮຳຫມັດ ຣໍສູລຂອງອັລລໍຫ໌ເປັນນະບີສຸດທ້າຍຂອງບັນດາສາດສະດາແລະຜູ້ປະກາດສານ ແລະຄວາມເຊື່ອໃນວັນສຸດທ້າຍ(ກິຍາມະຫ໌) ແລະພວກເຮົາຮູ້ວ່າຖ້າຫາກຊີວິດໃນໂລກນີ້ເຖິງວັນອະວາສານ ຊີວິດແລະການມີຢູ່ຈະເປັນສິ່ງໄຮ້ຄ່າບໍ່ປະໂຫຍດໂດຍສິ້ນເຊີງ      ແລະຄວາມເຊື່ອໃນສະພາວະໂຊກຊະຕາ    ຄວາມດີຄວາມຊົ່ວ

໒໒.    ແລະບັນດາສາດທັ້ງຫຼາຍເປັນຜູ້ບໍ່ມີບາບ    ຂໍຄວາມສັນຕິສຸກຈົ່ງມີກັບເຂົາເຈົ້າ ສິ່ງທີ່ພວກເຂົາຖ່າຍທອດໃຫ້ຊາບກ່ຽວກັບພຣະເຈົ້າ   ແລະພວກເຂົາເຈົ້າແມ່ນຜູ້ບໍ່ມີບາບ    ສຳລັບທຸກສິ່ງທຸກຢ່າງທີ່ຂັດກັບຈິດໃຈຫຼືຖືກປະຕິເສດໂດຍສິນທຳອັນດີ    ແລະບັນດາສາດສະດາໄດ້ຖືກມອບຫມາຍໃຫ້ເຜີຍແຜ່ຄຳສັ່ງໃຊ້ຂອງອັລລໍຫ໌ໃຫ້ກັບບ່າວຂອງພຣະອົງ    ແລະບັນດາສາດສະດາບໍ່ໄດ້ມີຄຸນນະສົມບັດຄວາມເປັນພຣະເຈົ້າ      ຫຼືເປັນລູກຂອງພຣະເຈົ້າແຕ່ພວກເຂົາເປັນມະນຸດ ຄືກັບມະນຸດຄົນອື່ນໆ ເຊິ່ງອັລລໍຫ໌ອົງຜູ້ຊົງສູງສົ່ງໄດ້ເປີດເຜີຍໃຫ້ແກ່ພວກເຂົາ

໒໓.ແລະອິດສະລາມຮຽກຮ້ອງການກາບໄຫວ້ຕໍ່ພຣະເຈົ້າພຽງອົງດຽວເທົ່ານັ້ນ ດ້ວຍຫຼັກການຂອງການເຄົາລົບກາບໄຫວ້ທີ່ສຳຄັນຄື: ການລະຫມາດ ໄດ້ແກ່ ການຢືນ, ການຄຸເຂົ່າ, ການຂາບໄຫວ້ສຸຈູດ, ການລະນຶກເຖິງພຣະເຈົ້າ, ການສັນລະເສີນພຣະອົງ ແລະການວິງວອນ    ບຸກຄົນຜູ້ຫນຶ່ງອະທິຖານຫ້າຄັ້ງທຸກມື້    ຈະບໍ່ມີຄວາມແຕກຕ່າງລະຫວ່າງຄົນຮັ່ງມີກັບຄົນທຸກຍາກ   ຜູ້ບັງຄັບບັນຊາ ກັບຜູ້ໃຕ້ບັງຄັບບັນຊາ ທຸກຄົນລ້ວນຢືນຢູ່ໃນແຖວດຽວໃນລະຫວ່າງການລະຫມາດ ແລະຊະກາດ ເຊິ່ງເປັນເງິນຈຳນວນນ້ອຍ “ຕາມເງື່ອນໄຂແລະຈຳນວນທີ່ພຣະເຈົ້າໄດ້ກຳນົດ” ເປັນຂໍ້ບັງຄັບໃນຄວາມຮັ່ງມີຂອງຄົນລວຍ  ແລະໃຫ້ຈ່າຍຊະກາດແກ່ຄົນທຸກຍາກແລະຄົນອື່ນໆ, ປີລະເທື່ອ ແລະຖືສິນອົດ ຄື: ການງົດເວັ້ນການຖືສິນອົດເຂົ້າອາຫານໃນຕອນກາງວັນໃນເດືອນຣໍມາດອນມັນເປັນບຳລຸງຂັດເກົາຈິດໃຈແລະເຝິກຄວາມອົດທົນແລະການສະແຫວງບຸນ(ຮັດຈ໌)  ເຊິ່ງກໍ່ຄື:  ການໄປເຮືອນຂອງອັລລໍຫ໌ໃນ ນະຄອນມັກກະຫ໌ ອັລ-ມຸກັຣເຣາະມະຫ໌ ຄັ້ງຫນຶ່ງໃນຊີວິດສຳລັບຜູ້ມີຄວາມສາມາດ  ໃນການທຳຮັຈ  ສະແຫວງບຸນຄັ້ງນີ້ທຸກຄົນມີຄວາມເທົ່າທຽມກັນທຸກຄົນຕ່າງພາກັນຫັນຫນ້າໄປສູ່ພຣະອົງຜູ້ຊົງສ້າງ  ມະຫາບໍລິສຸດແດພຣະອົງ  ແລະເຮັດໃຫ້ຄວາມແຕກຕ່າງແລະຄວາມພູກພັນຫາຍໄປ

໒໔.  ຫນຶ່ງໃນສິ່ງທີ່ຍິ່ງໃຫຍ່ທີ່ສຸດທີ່ແຍກແຍະການເຄົາລົບບູຊາໃນອິດສະລາມຄື ຮູບແບບການກະທຳ ເວລາ ແລະເງື່ອນໄຂຕ່າງໆຖືກກຳຫນົດບັນຫຍັດໂດຍພຣະອົງອັລລໍຫ໌ຜູ້ຊົງສູງສົ່ງ      ແລະຊົງເປີດເຜີຍໃຫ້ກັບສາດສະດາຂອງພຣະອົງ (ຂໍ ຄວາມສະຫງົບສຸກຈາກອັລລໍຫ໌ຈົ່ງທີ່ແດທ່ານ) ມະນຸດບໍ່ໄດ້ເຂົ້າໄປແຊກແຊງສິ່ງເຫຼົ່ານັ້ນ ເພີ່ມ ຫຼື ຂາດຫາຍໄປ ຈົນຮອດທຸກມື້ນີ້  ແລະສາດສະດາທັງຫມົດ  ໄດ້ຮຽກຮ້ອງໃຫ້ປະຕິບັດເຄົາລົບນະມັດສະການທີ່ຍິ່ງໃຫຍ່ທັງຫມົດນີ້  ຂໍຄວາມສັນຕິສຸກຈົ່ງມີກັບເຂົາເຈົ້າ

໒໕. ຣໍສູລ ຂອງອິສລາມ ຄື ມຸຮຳຫມັດ ບິນ ອັບດູລລໍຫ໌ ຈາກລູກຫລານຂອງ ອິດສະມາອີລ ບິນ ອິບຣໍຮີມ ສັນຕິຈົ່ງມີກັບເຂົາເຈົ້າເກີດຢູ່ໃນມັກກະຫ໌ ໃນປີ ໕໗໑ ຄິດສະກະລາດ, ແລະເປັນບ່ອນທີ່ພາລະກິດຂອງລາວໃນຖານະເປັນສາດສະດາໄດ້ເລີ່ມຕົ້ນ ແລະໄດ້ອົບພະຍົບໄປເມືອງມາດີນະຫ໌ ແລະ ລາວບໍ່ເຄີຍມີສ່ວນຮ່ວມໃນການກະທຳໃດໆທີ່ນັບຖືພຣະເຈົ້າຫຼາຍໆອົງຮ່ວມກັບຜູ້ຄົນຂອງລາວ ເຖິງແມ່ນວ່າຈະເຂົ້າຮ່ວມກັບພວກເຂົາໃນການກະທຳອັນສູງສົ່ງເທົ່ານັ້ນ ລາວມີນິໄສທີ່ຊື່ສັດ ກ່ອນທີ່ລາວຈະຖືກມອບໝາຍໃຫ້ປະຕິບັດພາລະກິດ, ເຊິ່ງເຮັດໃຫ້ລາວໄດ້ຮັບຕຳແໜ່ງທີ່ນ່າເຊື່ອຖືໄດ້ອັລລໍຫ໌ໄດ້ມອບຫມາຍໃຫ້ລາວປະຕິບັດພາລະກິດເມື່ອ  ອາຍຸສີ່ສິບປີ  ແລະສະຫນັບສະຫນູນລາວດ້ວຍປາຕິຫານທີ່ຍິ່ງໃຫຍ່ທີ່ສຸດຄືຄຳພີອັລກຸຣອານ      ທີ່ຖືເປັນເຄື່ອງຫມາຍທີສູງສົ່ງທີ່ສຸດຂອງສາດສະດາ ແລະສັນຍານດຽວທີ່ຍັງເຫຼືອຢູ່ຈົນເຖິງມື້ນີ້, ອັລລໍຫ໌ໄດ້ສົ່ງທ່ານມາເພື່ອການຊີ້ນຳທາງ ແລະ ສາດສະຫນາແຫ່ງຄວາມຈິງເພື່ອນຳຜູ້ຄົນອອກຈາກຄວາມມືດຈາກສິ່ງປະຕິເສດສັດທາ ແລະຈາກຄວາມໂງ່ຈ້າສູ່ແສງສະຫວ່າງ ຫຼັກເຕົາຮີດ(ຫຼັກເອກະພາບ) ແລະເປັນຜູ້ສັດທາ, ອັລລໍຫ໌ຊົງເປັນພະຍານວ່າພຣະອົງໄດ້ສົ່ງເຂົາໄປ    ເພື່ອເຊື້ອເຊີນຜູ້ຄົນໄປສູ່ອັລລໍຫ໌   ໂດຍການອະນຸຍາດພຣະປະສົງຂອງພຣະອົງອັລລໍຫ໌

໒໖.  ຫຼັກຊາຣີອະຫ໌  ຂໍ້ລະບຽບຂອງອິດສະລາມທີ່ທ່ານນະບີມຸຮຳຫມັດ  ໄດ້ນຳ  (ຂໍ  ຄວາມສະຫງົບສຸກຈາກອັລລໍຫ໌ຈົ່ງທີ່ແດທ່ານ) ຄື ສຸດທ້າຍຂອງສານແລະຂໍ້ລະບຽບກົດຫມາຍອັນສັກສິດ ເປັນຊາຣີອະຫ໌   ແຫ່ງຄວາມສົມບູນແບບແລະການປະຕິຮູບສາສະຫນາຂອງປະຊາຊົນແລະກິດຈະການທາງໂລກສິ່ງທີ່ສຳຄັນອັນດັບທຳອິດແມ່ນການປົກປ້ອງສາດສະຫນາ, ຊີວິດ, ສົມບັດສັບສິນ, ຈິດໃຈ,    ແລະລູກຫຼານຂອງຜູ້ຄົນ    ມັນຍົກເລີກກົດໝາຍທີ່ຜ່ານມາທັງໝົດ ເຊັ່ນດຽວກັບສານ ທີ່ໄດ້ຖືກປະທານເຊິ່ງກ່ອນໜ້າກໍ່ຍົກເລີກທັງໝົດ

໒໗.  ອັລລໍຫ໌ຜູ້ຊົງອຳນາດ  ບໍ່ຍອມຮັບສາສະຫນາອື່ນໃດນອກຈາກສາສະໜາອິດສະລາມທີ່ສາດສະນະທູດມຸຮຳຫມັດໄດ້ນຳມາ (ຂໍ  ຄວາມສະຫງົບສຸກຈາກອັລລໍຫ໌ຈົ່ງທີ່ແດທ່ານ)  ແລະຜູ້ໃດທີ່ນັບຖືສາສະຫນາອື່ນນອກຈາກອິດສະລາມ   ສາດສະນານັ້ນກໍ່ຈະບໍ່ຖືກຍອມຮັບຈາກພຣະອົງອັລລໍຫ໌

໒໘.  ຄຳພີອັລກຸຣອານ  ເປັນຄຳພີທີ່ອັລລໍຫ໌ຊົງເປີດເຜີຍແກ່ສາສະທູດມຸຮຳຫມັດ    (ຂໍຄວາມສະຫງົບສຸກຈາກອັລລໍຫ໌ຈົ່ງທີ່ແດທ່ານ)  ເປັນຄຳເວົ້າຂອງອັລລໍຫ໌   ພຣະຜູ້ເປັນເຈົ້າແຫ່ງສາກົນລະໂລກ    ພຣະອົງອັລລໍຫ໌ໄດ້ທ້າທາຍກັບມັນທັງມະນຸດແລະຈິນເພື່ອສ້າງສິ່ງທີ່ຄ້າຍຄື    ຫຼືແມ້ກະທັ້ງບົດໜຶ່ງຂອງມັນໃຫ້ຄືກັບອັລກຸຣອານຂອງພຣະອົງ  ຊຶ່ງເປັນສິ່ງທ້າທາຍທີ່ຍັງຄົງຄ້າງຈົນເຖິງທຸກມື້ນີ້    ຄຳພີອັລກຸຣອານ     ຕອບຄຳຖາມທີ່ສຳຄັນຫຼາຍໆຄຳຖາມ    ທີ່ເຮັດໃຫ້ຜູ້ຄົນຫຼາຍລ້ານຄົນຫາຍສັບສົນ    ຄຳພີອັລກຸຣອານ     ຖືກຮັກສາໄວ້ໃນພາສາອາຫລັບໃນຮູບແບບດຽວກັນທີ່ມັນຖືກເປີດເຜີຍຄັ້ງທຳອິດບໍ່ມີຕົວອັກສອນໃດໆຖືກຕັດອອກຈາກມັນ ແລະມັນຖືກພິມອອກ ແລະເຜີຍແຜ່ ມັນເປັນຫນັງສືທີ່ຍິ່ງໃຫຍ່ແລະນ່າມະຫັດສະຈັນ   ຄວນຄ່າທີ່ຈະອ່ານ   ຫຼືອ່ານຄວາມຫມາຍຂອງມັນ      ໃນທຳນອງດຽວກັນກັບຊຸນນະຫ໌ຂອງທ່ານນະບີ      (ຂໍຄວາມສະຫງົບສຸກຈາກອັລລໍຫ໌ຈົ່ງທີ່ແດທ່ານ) ຕະລອດຈົນຄຳສອນແລະຊີວະປະຫວັດຂອງລາວຍັງຖືກຮັກສາໄວ້   ແລະລາຍງານຕົວບົດຫຼັກຖານຜ່ານສາຍງານຜູ້ບັນທຶກທີ່ຖືກຕ້ອງເຊື່ອຖືໄດ້ ນອກຈາກນີ້ມັນຍັງຖືກພິມອອກເປັນພາສາອາຣັບສິ່ງທີ່ຣໍສູລຂອງອັລລໍຫ໌ ໄດ້ເວົ້າ (ຂໍຄວາມສະຫງົບສຸກຈາກອັລລໍຫ໌ຈົ່ງທີ່ແດທ່ານ)      ແລະແປເປັນພາສາອີກຫຼາຍໆພາສາທົ່ວໂລກ   ທັງຄຳພີອັລກຸຣອານແລະຊຸນນະຫ໌ຂອງທ່ານນະບີ   (ຂໍຄວາມສະຫງົບສຸກຈາກອັລລໍຫ໌ຈົ່ງທີ່ແດທ່ານ)     ປະກອບຂຶ້ນເປັນແຫຼ່ງທີ່ມາດຽວຂອງກົດເກນການປົກຄອງແລະກົດໝາຍນິຕິກຳຂອງອິດສະລາມ,       ອິດສະລາມບໍ່ສາມາດນຳເອົາການປະຕິບັດມາຈາກການປະພຶດຂອງບັນດາສາວົກຫຼືໃຜຜູ້ຫນຶ່ງ ແຕ່ເອົາແນວທາງປະຕິບັດຈາກໂອການອະຫ໌ຍູຂອງອັລລໍຫ໌  ນັ້ນຄືອັລກຸຣອານທີ່ຍິ່ງໃຫຍ່  ແລະຊຸນນະຫ໌ຂອງທ່ານນະບີ

